Vientiane College

# ASSESSMENT AT VIENTIANE COLLEGE




## ASSESSMENT AT VIENTIANE COLLEGE IS:

- **ongoing** (based on observations of student performance throughout the term)
- **incorporating formative** and **summative** processes

Assessment at Vientiane College is ongoing (continuous). That means assessments are not based on end of term tests. Instead, teachers gather evidence of student performance throughout the term. This evidence comes from informal observations alongside more formal assessments of what the students do (for example: overall participation in class; reading aptitude and ability; writing approaches and output; speaking and listening skills and achievement; accuracy and breadth of language use).

The purpose of assessments is to provide feedback to both students and teachers. Teachers are encouraged to continually reflect on each student and regularly give them feedback. Students are also expected to reflect on their learning and think about their strengths, areas for improvement, and what they should do next.

Teachers record both the informal and formal assessment grades in the following areas:

| Discover Program (DR-DB) | World Program | Global Program | Diploma Program |
|---|---|---|---|
| Attendance | Attendance | Attendance | Attendance |
| Participation | Participation | Participation | Participation |
| Reading | Reading | Reading | Learning Strategies |
| Writing | Writing | Writing | Skills Application |
| Listening | Listening | Listening | Grammar & Vocabulary Development |
| Speaking | Speaking | Speaking | Assignments |
| Vocabulary | Vocabulary | Vocabulary | |
| Grammar | Grammar | Grammar | |

Note: There are a few classes which have special reports which do not follow the above guidelines. Your teacher will tell you if that is your class.

The grades ( A B C D or F ) or the end of term reports are used according to these grade descriptors:

| Global, Discover, World | Diploma | Description |
|---|---|---|
| **A**<br>Very Good | High Distinction | A student whose results are **consistently higher than expectations** for the level. Their work, participation and attendance are very good. |
| **B**<br>Good | Distinction | An **above average student** whose results are consistently good and sometimes above expectations for the level. Their work, participation and attendance are consistently good. |
| **C**<br>Fair | Credit | An **average student** whose results are consistent with expectations for the level. Their work, participation and attendance are of an acceptable standard and indicate satisfactory progress. |
| **D**<br>Borderline | Pass | A student whose results are **below expectations** for the level. Some aspect of their work, participation and/or attendance requires improvement. |
| **F**<br>Fail | Fail | A student whose results are **significantly below expectations** for the level. They are not making sufficient progress and need to improve their work, participation and/or attendance. |

For Diploma classes only: grades may include + or - (A- B+)

The end of term grades reflect the student's overall performance.

**Please note that students who fail to achieve the required standard will not be allowed to progress to the next level.**

Students who are struggling will be counselled by College staff during the term. If additional support is required, students may contact reception at any time to make an appointment to talk to the academic support staff.

If you have any questions about grades, please contact the school.



Vientiane College

# ການປະເມີນ ຜົນການຮຽນ




**ລະບົບການປະເມີນຜົນການຮຽນທີ່ ວິທະຍາໄລວຽງຈັນ ມີດັ່ງນີ້:**

- **ການປະເມີນຜົນການຮຽນແບບຕໍ່ເນື່ອງ** (ອີງຕາມການສັງເກດການ ການຮຽນຮູ້ຂອງນັກຮຽນຕະຫຼອດພາກຮຽນ)
- **ການສອບເສັງ ແລະ ການປະເມີນຜົນການຮຽນ**

ລະບົບການປະເມີນຜົນການຮຽນທີ່ ວິທະຍາໄລວຽງຈັນ ແມ່ນລະບົບການປະເມີນຜົນແບບຕໍ່ເນື່ອງຕະຫຼອດໄລຍະເວລາການຮຽນ ຊຶ່ງໝາຍຄວາມວ່າ ການປະເມີນບໍ່ໄດ້ອີງໃສ່ແຕ່ພຽງຜົນການເສັງທ້າຍພາກຮຽນພຽງແຕ່ຢ່າງດຽວ ແຕ່ຄູອາຈານຈະປະເມີນພັດທະນາການດ້ານການຮຽນໄປພ້ອມກັບ ການເຮັດກິດຈະກຳພາຍໃນຫ້ອງ ເປັນຕົ້ນແມ່ນ ການມາໂຮງຮຽນຢ່າງເປັນປົກກະຕິ; ຄວາມມີພຶດຕິກຳ... ຄວາມມີພຶບໄຫວ ແລະ ຄວາມສາມາດໃນການອ່ານ; ຄວາມສາມາດໃນການຂຽນ; ທັກສະການເວົ້າ ແລະ ການຟັງ; ການນຳໃຊ້ພາສາໄດ້ຢ່າງຖືກຕ້ອງ ແລະ ກວ້າງຂວາງ.

ຈຸດປະສົງຂອງການປະເມີນຜົນການຮຽນ ແມ່ນເພື່ອສະທ້ອນຜົນການຮຽນ-ການສອນ ຂອງນັກຮຽນ ແລະ ຄູອາຈານ ຊຶ່ງຄູອາຈານຍັງມີໜ້າທີ່ສະໜັບສະໜູນ ແລະ ໃຫ້ຄຳຄິດເຫັນແກ່ນັກຮຽນຢ່າງເປັນປະຈຳ. ຄູອາຈານຍັງຄາດຫວັງວ່າ ນັກຮຽນຈະທົບທວນຕົນເອງ, ຮູ້ໄດ້ເຖິງຈຸດດີ-ຈຸດອ່ອນ, ຈຸດທີ່ຄວນປັບປຸງ ແລະ ສິ່ງທີ່ຄວນຈະເນັ້ນໜັກໃນການຮຽນຂອງຕົນຕໍ່ໜ້າ.

ຄູອາຈານຈະເກັບກຳ ແລະ ບັນທຶກຜົນການຮຽນທັງແບບທີ່ເປັນທາງການ ແລະ ບໍ່ເປັນທາງການ ດັ່ງລາຍລະອຽດລຸ່ມນີ້:

| ຫຼັກສູດ Discover (DR-DB) | ຫຼັກສູດ World | ຫຼັກສູດ Global | ຫຼັກສູດ Diploma |
|---|---|---|---|
| ການມາໂຮງຮຽນ | ການມາໂຮງຮຽນ | ການມາໂຮງຮຽນ | ການມາໂຮງຮຽນ |
| ການມີສ່ວນຮ່ວມ | ການມີສ່ວນຮ່ວມ | ການມີສ່ວນຮ່ວມ | ການມີສ່ວນຮ່ວມ |
| ການອ່ານ | ການອ່ານ | ການອ່ານ | ການວາງແຜນໃນການຮຽນ |
| ການຂຽນ | ການຂຽນ | ການຂຽນ | ການປະຍຸກໃຊ້ທັກສະ |
| ການຟັງ | ການຟັງ | ການຟັງ | ການພັດທະນາດ້ານໄວຍະກອນ ແລະ ການພັດທະນາດ້ານຄຳສັບ |
| ການເວົ້າ | ການເວົ້າ | ການເວົ້າ | ການເຮັດບົດຝຶກຫັດ |
| ຄຳສັບ | ຄຳສັບ | ຄຳສັບ | |
| ໄວຍະກອນ | ໄວຍະກອນ | ໄວຍະກອນ | |

ໝາຍເຫດ: ອາດຈະມີບາງຊັ້ນຮຽນທີ່ບໍ່ໄດ້ນຳໃຊ້ລະບົບການປະເມີນຜົນທີ່ກ່າວມາຂ້າງເທິງ ຊຶ່ງຄູອາຈານຈະແຈ້ງໃຫ້ຊາບ ຖ້າຫາກມີການປະເມີນແບບພິເສດເພີ່ມຕື່ມ.

ການໃຊ້ຄະແນນ ( A, B, C, D ຫຼື F) ຫຼື ໃບຄະແນນທ້າຍເທີມແມ່ນຈະໃຊ້ສັນຍາລັກຊຶ່ງມີຄວາມໝາຍດັ່ງນີ້:

| ຫຼັກສູດ Global,Discover, World | ຫຼັກສູດ Diploma | ຄໍາອະທິບາຍ |
|---|---|---|
| **A** ດີຫຼາຍ | ດີຫຼາຍ | ນັກຮຽນຜູ້ທີ່ມີຜົນການຮຽນດີເກີນຄາດໝາຍໃນລະດັບທີ່ຕົນເອງຮຽນຢູ່. ການຮຽນ , ການມີສ່ວນຮ່ວມ ແລະ ການມາໂຮງຮຽນ ແມ່ນຢູ່ໃນລະດັບທີ່ດີເກີນຄາດໝາຍ. |
| **B** ດີ | ດີ | ນັກຮຽນຜູ້ທີ່ມີຜົນການຮຽນດີໃນລະດັບທີ່ຕົນເອງຮຽນຢູ່. ການຮຽນ , ການມີສ່ວນຮ່ວມ ແລະ ການມາໂຮງຮຽນ ແມ່ນຢູ່ໃນລະດັບທີ່ດີ. |
| **C** ປານກາງ | ປານກາງ | ນັກຮຽນຜູ້ທີ່ມີຜົນການຮຽນປານກາງໃນລະດັບທີ່ຕົນເອງຮຽນຢູ່. ການຮຽນ , ການມີສ່ວນຮ່ວມ ແລະ ການມາໂຮງຮຽນ ແມ່ນໄດ້ຕາມມາດຕະຖານທີ່ໜ້າພຶງພໍໃຈ. |
| **D** ອ່ອນ | ອ່ອນ | ນັກຮຽນຜູ້ທີ່ມີຜົນການຮຽນຕໍ່າກວ່າຄາດໝາຍໃນລະດັບທີ່ຕົນເອງຮຽນຢູ່. ການຮຽນ , ການມີສ່ວນຮ່ວມ ແລະ ການມາໂຮງຮຽນ ຕ້ອງໄດ້ຮັບການປັບປຸງ. |
| **F** ຕົກ | ຕົກ | ນັກຮຽນຜູ້ທີ່ມີຜົນການຮຽນຕໍ່າກວ່າຄາດໝາຍຫຼາຍໃນລະດັບທີ່ຕົນເອງຮຽນຢູ່. ນັກຮຽນບໍ່ມີຄວາມກ້າວໜ້າໃນການຮຽນພຽງພໍ. ຕ້ອງໄດ້ປັບປຸງດ້ານການຮຽນ, ການມີສ່ວນຮ່ວມໃນຫ້ອງ ແລະ ການມາໂຮງຮຽນຢ່າງຈິງຈັງ. |

ຄະແນນໃນຫ້ອງລະດັບ Diploma ແມ່ນສາມາດມີ + ຫຼື - ( ຕົວຢ່າງ: A- B+)

ໃບຄະແນນທ້າຍເທີມ ແມ່ນສິ່ງທີ່ຈະປະເມີນຜົນການຮຽນທັງໝົດຂອງນັກຮຽນໃນແຕ່ລະເທີມ

**ຖ້ານັກຮຽນຄົນໃດມີຜົນການຮຽນຕໍ່າກວ່າມາດຕະຖານທີ່ໂຮງຮຽນຄາດໝາຍ**
**ແມ່ນບໍ່ສາມາດຮຽນຕໍ່ໃນລະດັບຕໍ່ໄປໄດ້ (ຮຽນຊໍ້າຫ້ອງ).**

ນັກຮຽນຜູ້ໃດທີ່ປະສົບບັນຫາໃນລະຫວ່າງການຮຽນ ແມ່ນສາມາດຂໍຄໍາປຶກສາຈາກພະນັກງານ ວິທະຍາໄລວຽງຈັນ ຖ້ານັກຮຽນຕ້ອງການການຊ່ວຍເຫຼືອເພີ່ມຕື່ມ ແມ່ນສາມາດຕິດຕໍ່ພະແນກຮັບຕ້ອນເພື່ອນັດໝາຍ ແລະ ໂອ້ລົມກັບພະນັກງານວິຊາການຜູ້ທີ່ຮັບຜິດຊອບ.

ຖ້ານັກຮຽນມີຄໍາຖາມເພີ່ມຕື່ມກ່ຽວກັບຜົນຄະແນນສາມາດຕິດຕໍ່ຜົວພັນກັບ ວິທະຍາໄລວຽງຈັນ ໄດ້ດ້ວຍຕົນເອງ.

